ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 784 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 03 ກັນຍາ 2019

# ຂໍ້ຕົກລົງ
# ວ່າດ້ວຍນະໂຍບາຍຊຸກຍູ້ທະນາຄານທຸລະກິດສະໜອງສິນເຊື່ອ ເພື່ອສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມດຳລັດວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ນະໂຍບາຍພື້ນຖານໃນການຊຸກຍູ້ທະນາຄານທຸລະກິດສະໜອງສິນເຊື່ອ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ສາມາດເຂົ້າຫາແຫຼ່ງທຶນໄດ້ຢ່າງສະດວກ, ກວ້າງຂວາງ ແລະ ມີປະສິດທິພາບ, ແນໃສ່ເຮັດໃຫ້ທຸລະກິດມີການຂະຫຍາຍຕົວແບບຍືນຍົງ, ສາມາດຜະລິດສິນຄ້າອອກຈຳໜ່າຍຮັບໃຊ້ສັງຄົມ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ແລະ ສ້າງເສດຖະກິດໃຫ້ມີການຂະຫຍາຍຕົວຢ່າງເຂັ້ມແຂງ.

**ມາດຕາ 2 ນະໂຍບາຍຊຸກຍູ້ທະນາຄານທຸລະກິດສະໜອງສິນເຊື່ອ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

ນະໂຍບາຍຊຸກຍູ້ທະນາຄານທຸລະກິດສະໜອງສິນເຊື່ອ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນໜຶ່ງໃນນະໂຍບາຍການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ ທີ່ສຸມໃສ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແນໃສ່ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວແບບຍືນຍົງ ໃນນີ້, ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດນະໂຍບາຍດັ່ງກ່າວອອກມາ ເພື່ອສ້າງເງື່ອນໄຂໃຫ້ແກ່ທະນາຄານທຸລະກິດໃນການຈັດຕັ້ງປະຕິບັດ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດ ເພື່ອສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ທີ່ດຳເນີນທຸລະກິດໃນຂະແໜງການຜະລິດເປັນສິນຄ້າ, ການຄ້າ ແລະ ການບໍລິການທີ່ລັດຖະບານໃຫ້ການສະໜັບສະໜູນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງລຸ່ມນີ້:

1. **ວິສາຫະກິດຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວທຸລະກິດຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ເຊິ່ງແບ່ງອອກເປັນ 3 ຂະໜາດ ຄື: ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ວິສາຫະກິດຂະໜາດກາງ ໂດຍອີງໃສ່ຈຳນວນແຮງງານສະເລ່ຍໃນປີ, ມູນຄ່າຊັບສິນໃນທຸລະກິດ ຫຼື ຍອດລາຍຮັບທຸລະກິດປະຈຳປີ ຕາມດຳລັດວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ໄດ້ກຳນົດໄວ້.
2. **ຜູ້ປະກອບກິດຈະການ** ໝາຍເຖິງ ເຈົ້າຂອງ ຫຼື ຜູ້ບໍລິຫານວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ເຮັດທຸລະກິດໃດໜຶ່ງເພື່ອສ້າງລາຍໄດ້ທີ່ເກີດຈາກຫົວຄິດປະດິດສ້າງ, ພູມປັນຍາ ແລະ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງທັງກຳໄລ-ຂາດທຶນດ້ວຍຕົນເອງ.
3. **ຜູ້ສະໜອງສິນເຊື່ອ** ໝາຍເຖິງ ທະນາຄານທຸລະກິດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ
4. **ທຶນສົມທົບ** ໝາຍເຖິງ ທຶນທີ່ປະກອບສ່ວນຮ່ວມລົງທຶນໃນໂຄງການຂອງຜູ້ປະກອບກິດຈະການວິສາຫະກິດຂະໜາດນ້ອຍ ແລະ ກາງ ຢ່າງໜ້ອຍ 30% ຂອງມູນຄ່າໂຄງການທີ່ສາມາດກວດສອບໄດ້.

### ມາດຕາ 4 ຫຼັກການພື້ນຖານໃນການສະໜອງສິນເຊື່ອ

ຜູ້ສະໜອງສິນເຊື່ອ ຕ້ອງປະຕິບັດຕາມຫຼັກການພື້ນຖານໃນການສະໜອງສິນເຊື່ອ ດັ່ງລຸ່ມນີ້:

1. ຮັບປະກັນປະສິດທິຜົນ, ສາມາດເກັບຄືນຕົ້ນທຶນ ແລະ ດອກເບ້ຍ;
2. ການສະໜອງສິນເຊື່ອຕ້ອງຖືກກັບວັດຖຸປະສົງ ແລະ ເປົ້າໝາຍ;
3. ມີຫຼັກຊັບຄ້ຳປະກັນ ຫຼື ໄດ້ຮັບການຄ້ຳປະກັນ ຈາກບໍລິສັດຄ້ຳປະກັນສິນເຊື່ອ;
4. ມີການປະເມີນຄວາມສ່ຽງຂອງທຸລະກິດ ພ້ອມທັງກວດສອບການຈັດຕັ້ງປະຕິບັດທຸລະກິດຕົວຈິງກ່ອນການອະນຸມັດສິນເຊື່ອ.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້, ນຳໃຊ້ສະເພາະບັນດາທະນາຄານທຸລະກິດ ທີ່ປະຕິບັດນະໂຍບາຍສະໜອງສິນເຊື່ອ ເພື່ອຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ.

## ໝວດທີ II
## ເງື່ອນໄຂຜູ້ສະໜອງສິນເຊື່ອ

### ມາດຕາ 6 ເງື່ອນໄຂຜູ້ສະໜອງສິນເຊື່ອ

ຜູ້ສະໜອງສິນເຊື່ອໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງຕາມຂໍ້ຕົກລົງສະບັບນີ້ ຈະຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີນະໂຍບາຍສິນເຊື່ອເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢ່າງຈະແຈ້ງ;

2. ມີໂຄງຮ່າງການຈັດຕັ້ງ, ບຸກຄະລາກອນ ແລະ ເຄື່ອງມືໃນການບໍລິຫານສິນເຊື່ອ ສໍາລັບວິສາຫະກິດ ຂະໜາດນ້ອຍ ແລະ ກາງ ທີ່ຄົບຖ້ວນ;
3. ມີຄູ່ມືການບໍລິຫານຄວາມສ່ຽງໃນການສະໜອງສິນເຊື່ອແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຮັດກຸມ.

## ໝວດທີ III
## ແຫຼ່ງທຶນໃນການສະໜອງສິນເຊື່ອ

**ມາດຕາ 7 ແຫຼ່ງທຶນໃນການສະໜອງສິນເຊື່ອ**

ແຫຼ່ງທຶນໃນການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນມາຈາກແຫຼ່ງທຶນທະນາຄານທຸລະກິດ ທີ່ໄດ້ຈາກການລະດົມເງິນຝາກນໍາລູກຄ້າ, ການກູ້ຢືມ ແລະ ອື່ນໆ.

**ມາດຕາ 8 ການນໍາໃຊ້ແຫຼ່ງທຶນໃນການສະໜອງສິນເຊື່ອ**

ທະນາຄານທຸລະກິດ ສາມາດນໍາໃຊ້ແຫຼ່ງທຶນຂອງຕົນສະໜອງສິນເຊື່ອໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມກຸ່ມເປົ້າໝາຍລູກຄ້າທີ່ຕົນກໍານົດ.

## ໝວດທີ IV
## ຜະລິດຕະພັນ, ອັດຕາດອກເບ້ຍ ແລະ ວົງເງິນໃນການສະໜອງສິນເຊື່ອ

**ມາດຕາ 9 ຜະລິດຕະພັນໃນການສະໜອງສິນເຊື່ອ**

ທະນາຄານທຸລະກິດ ທີ່ສະໜອງສິນເຊື່ອໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດກໍານົດຜະລິດຕະພັນໃນການສະໜອງສິນເຊື່ອໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມແຜນການດໍາເນີນທຸລະກິດຂອງຕົນ ເຊິ່ງຜະລິດຕະພັນດັ່ງກ່າວນັ້ນ ຈະຕ້ອງມີຄວາມຊັດເຈນໃນດ້ານການຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ມີຄວາມແຕກຕ່າງຈາກຜະລິດຕະພັນເງິນກູ້ທົ່ວໄປ.

**ມາດຕາ 10 ອັດຕາດອກເບ້ຍໃນການສະໜອງສິນເຊື່ອ**

ທະນາຄານທຸລະກິດ ສາມາດກໍານົດອັດຕາດອກເບ້ຍໃນການສະໜອງສິນເຊື່ອໃຫ້ກັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມລະບຽບການຊຸກຍູ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງແຕ່ລະທະນາຄານທີ່ວາງອອກ.

**ມາດຕາ 11 ວົງເງິນໃນການສະໜອງສິນເຊື່ອ**

ທະນາຄານທຸລະກິດ ສາມາດສະໜອງສິນເຊື່ອໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນວົງເງິນສູງສຸດບໍ່ເກີນ 70% ຂອງມູນຄ່າໂຄງການລົງທຶນທັງໝົດ ຫຼື ຫຼັກຊັບຄໍ້າປະກັນ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ສະໜອງສິນເຊື່ອ

**ມາດຕາ 12 ນະໂຍບາຍຕໍ່ຜູ້ສະໜອງສິນເຊື່ອ**

ທະນາຄານທຸລະກິດ ທີ່ສະໜອງສິນເຊື່ອ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ພາຍໃຕ້ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການປະຕິບັດນະໂຍບາຍ ດັ່ງນີ້:

1. ໄດ້ຮັບການສໍາຮອງເງິນແຮລວມທົ່ວໄປ 0,2 % ຂອງຍອດເຫຼືອເງິນກູ້ທີ່ເປັນຊັ້ນປົກກະຕິ ສະເພາະລູກຄ້າເງິນກູ້ທີ່ເປັນວິສາຫະກິດຂະໜາດນ້ອຍ ແລະ ກາງ;
2. ມີສິດເຂົ້າຫາແຫຼ່ງທຶນ ທຫລ ເພື່ອແກ້ໄຂສະພາບຄ່ອງເມື່ອເຫັນວ່າມີຄວາມຈໍາເປັນ;
3. ໄດ້ຮັບການປະຕິບັດການຍ້ອງຍໍເປັນຕົ້ນແມ່ນ ໄດ້ຮັບການຍ້ອງຍໍເປັນທະນາຄານຕົວແບບໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຈາກລັດຖະບານ ແລະ ທະນາຄານແຫ່ງ ສປປ ລາວ;
4. ໄດ້ຮັບນະໂຍບາຍອື່ນໆ ຕາມການກໍານົດຂອງ ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

## ໝວດທີ VI
## ໜ້າທີ່ຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 13 ໜ້າທີ່ຂອງ ທະນາຄານແຫ່ງ ສປປ ລາວ**

1. ເປັນຜູ້ກໍານົດນະໂຍບາຍລວມມະຫາພາກທາງດ້ານສິນເຊື່ອ ເພື່ອຊຸກຍູ້ທະນາຄານທຸລະກິດ ສ້າງນະໂຍບາຍໃນການສະໜອງສິນເຊື່ອໃຫ້ກັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ;
2. ຄົ້ນຄວ້າ, ສ້າງລະບຽບ, ເງື່ອນໄຂ ແລະ ສະພາບແວດລ້ອມພື້ນຖານໂຄງລ່າງ ທີ່ເອື້ອອໍານວຍໃຫ້ແກ່ ທະນາຄານທຸລະກິດໃນການຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
3. ຊຸກຍູ້ທະນາຄານທຸລະກິດ ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

**ມາດຕາ 14 ໜ້າທີ່ຂອງທະນາຄານທຸລະກິດ**

1. ຄົ້ນຄວ້າພັນຂະຫຍາຍ ແລະ ກໍານົດນິຍາມສິນເຊື່ອວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງຕົນໃຫ້ຊັດເຈນ;
2. ຄົ້ນຄວ້າກໍານົດນະໂຍບາຍໃນການສະໜອງສິນເຊື່ອຂອງຕົນໃຫ້ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ;
3. ຄົ້ນຄວ້າສ້າງຜະລິດຕະພັນເງິນກູ້, ກໍານົດໄລຍະເວລາ, ວົງເງິນກູ້ ແລະ ອັດຕາດອກເບ້ຍ ໃຫ້ແທດເໝາະກັບແຕ່ລະປະເພດຂອງສິນເຊື່ອວິສາຫະກິດຂະໜາດນ້ອຍ ແລະ ກາງ;
4. ຄົ້ນຄວ້າ, ປັບປຸງ ແລະ ພັດທະນາກົງຈັກການຈັດຕັ້ງ, ບຸກຄະລາກອນ, ເຄື່ອງມື ແລະ ສິ່ງອໍານວຍຄວາມສະດວກຂອງຕົນ ເພື່ອກຽມຄວາມພ້ອມ ແລະ ສ້າງເງື່ອນໄຂໃຫ້ສາມາດເຂົ້າຫາແຫຼ່ງທຶນໃນການສະໜອງສິນເຊື່ອ;
5. ດໍາເນີນການສະໜອງສິນເຊື່ອໃຫ້ກັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢ່າງມີປະສິດທິພາບ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດການສະໜອງສິນເຊື່ອ ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ກັບ ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ.

## ໝວດທີ VII
## ການຄຸ້ມຄອງ, ຕິດຕາມກວດກາ ແລະ ລາຍງານ

**ມາດຕາ 15 ການຄຸ້ມຄອງ ແລະ ຕິດຕາມກວດກາ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ແລະ ຕິດຕາມກວດກາບັນດາທະນາຄານທຸລະກິດ ທີ່ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

**ມາດຕາ 16 ການລາຍງານ**

ທະນາຄານທຸລະກິດ ທີ່ສະໜອງສິນເຊື່ອໃຫ້ກັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມຂໍ້ຕົກລົງສະບັບນີ້ ຈະຕ້ອງລາຍງານ ແລະ ສະໜອງຂໍ້ມູນການເຄື່ອນໄຫວກິດຈະການຂອງຕົນໃຫ້ກັບ ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ບັນດາກົມພາຍໃນທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການສະໜອງສິນເຊື່ອໃຫ້ກັບ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມຂໍ້ຕົກລົງສະບັບນີ້ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**